# ຄະນະປະຈຳສະພາແຫ່ງຊາດ ພິຈາລະນາວຽກສຳຄັນ ປະຈຳເດືອນສິງຫາ



*(ຂປລ) : ຄະນະປະຈຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມຄົ້ນຄວ້າວຽກງານສຳຄັນ ປະຈຳ ເດືອນ ສິງຫາ ໃນຕອນເຊົ້າວັນທີ 23 ສິງຫາ 2010 ນີ້ ພາຍໃຕ້ການ ເປັນປະ ທານ ຂອງ ທ່ານ ທອງສິງ ທຳມະວົງ, ປະທານສະພາແຫ່ງຊາດ, ໃນກອງປະຊຸມ ອະນຸກຳມະການແຕ່ລະຝ່າຍໃນຄະນະປະຈຳສະພາແຫ່ງຊາດ ໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດເຫັນ ໃສ່ຫລາຍບັນຫາທີ່ເປັນວຽກງານຈຸດສຸມ ປະຈຳເດືອນສິງຫາ 2010. ກອງປະຊຸມໄດ້ຮັບຟັງລາຍງານການກະກຽມວຽກງານເລືອກຕັ້ງສະມາຊິກສະພາ ແຫ່ງຊາດ ຊຸດ ທີ VII, ພ້ອມນີ້ ຍັງໄດ້ຄົ້ນຄວ້າເນື້ອໃນສົນທິສັນຍາສາກົນ ຫລາຍສະບັບເປັນຕົ້ນ: ສົນທິສັນຍາວ່າດ້ວຍການ ປ້ອງກັນອັນຕະລາຍຈາກວັດຖຸທາດນິວເຄຼຍ, ສົນທິສັນຍາວ່າດ້ວຍການຕິດ ເຄື່ອງໝາຍ ໃສ່ວັດຖຸລະເບີດ ປາສະຕິກ ເພື່ອຮັບໃຊ້ຈຸດປະສົງການຄົ້ນຫາ, ພ້ອມພິຈາລະນາ ການໃຫ້ສັດຕະຍາບັນແກ່ສັນຍາຂອບອາຊຽນ ວ່າດ້ວຍການອຳນວຍຄວາມສະດວກ ການຂົນສົ່ງ ລະຫວ່າງປະເທດ ແລະ ອະນຸສັນຍາວ່າ ດ້ວຍການກຳນົດເສັ້ນທາງຜ່ານແດນ ແລະ ສິ່ງອຳນວຍຄວາມສະດວກ, ພິຈາລະນາການໃຫ້ສັດ ຕະຍາ ບັນແກ່ສັນຍາ ວ່າດ້ວຍລະບົບທາງລົດໄຟຜ່ານອາຊີ ແລະ ການໃຫ້ສັດຕະຍາບັນແກ່ ສັນຍາວ່າດ້ວຍ ການລົງທຶນ ພາຍໃຕ້ຂອບສັນຍາວ່າດ້ວຍການຮ່ວມມືເສດຖະກິດຮອບດ້ານ ລະຫວ່າງອາຊຽນ ແລະ ສເກົາຫລີ, ພິຈາລະນາການໃຫ້ສັດຕະຍາບັນແກ່ສັນຍາວ່າດ້ວຍການຄ້າຜະລິດຕະພັນພາຍ ໃຕ້ຂອບສັນຍາອາຊຽນ ແລະ ອິນເດຍ. ນອກນີ້ຍັງໄດ້ຮັບຟັງການ ລາຍງານຜົນ ຂອງການທົບທວນ ການປະຕິບັດວຽກງານດ້ານສິດທິມະນຸດ ຂອງ ສປປ ລາວ ແລະ ວຽກງານຮີບດ່ວນຮັບໃຊ້ຈຸດປະສົງດັ່ງກ່າວ, ລວມທັງການຂໍສັດຕະຍາບັນແກ່ສົນທິສັນຍາທີ່ຈຳເປັນຈຳນວນໜຶ່ງ ກ່ອນການປ້ອງກັນບົດລາຍງານດັ່ງກ່າວ ໃນເດືອນກັນຍາ 2010, ຮັບຟັງແຜນການ

ເຄື່ອນໄຫວຢູ່ ຕ່າງປະເທດ ຈຳນວນໜຶ່ງ ຂອງສະມາຊິກສະພາແຫ່ງຊາດ ແລະ ການນຳກ່ຽວຂ້ອງສຳລັບໄລຍະທ້າຍປີ 2010 ແລະ ຮັບຟັງລາຍງານຄວາມຄືບໜ້າ ໂຄງ ການ ກໍ່ສ້າງຫ້ອງວ່າການສະພາແຫ່ງຊາດຫລັງໃໝ່ ແລະ ບັນຫາສຳຄັນອື່ນໆຈຳນວນໜຶ່ງ./.